ຂ່າວ
ພິທີລົງນາມການຮ່ວມມືລະຫວ່າງ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ບໍລິສັດເອັສທີ-ເມືອງໄທປະກັນໄພ ຈຳກັດ ວ່າດ້ວຍການບໍລິການຊຳລະສະສາງຄ່າບໍລິການຕ່າງໆຜ່ານ ທຄຕລ (BILL PAYMENT)

ນະຄອນຫຼວງວຽງຈັນ, ວັນທີ: 02/08/2017

ວັນທີ 02 ສິງຫາ 2017, ໄດ້ຈັດພິທີລົງນາມການຮ່ວມມືລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ບໍລິສັດເອັສທີ-ເມືອງໄທ ປະກັນໄພຈຳກັດ ວ່າດ້ວຍການບໍລິການຊຳລະຄ່າສາທາລະນຸປະໂພກ ແລະ ຄ່າບໍລິການຕ່າງໆ ຜ່ານລະບົບທະນາຄານ (ຫຼື Bill Payment) ຂອງ ທຄຕລ. ການລົງນາມໃນຄັ້ງນີ້, ແມ່ນລົງນາມໂດຍທ່ານ ພັນຊະນະ ຄຸນນຸວົງ, ຮອງຜູ້ອຳນວຍການໃຫຍ່ ທຄຕລ ແລະ ທ່ານ ຊານໄຊ ພິມສຸວັນ, ຜູ້ອຳນວຍການ ບໍລິສັດເອັສທີ-ເມືອງໄທປະກັນໄພ ຈຳກັດ. ເຂົ້າຮ່ວມເປັນສັກຂີພະຍານໂດຍ ຄະນະອຳນວຍການ ຄະນະພະແນກ, ສູນ ແລະ ສາຂາ ພາຍໃນນະຄອນຫຼວງວຽງຈັນ ຂອງ ທຄຕລ, ຄະນະຜູ້ບໍລິຫານ ບໍລິສັດເອັສທີ-ເມືອງໄທປະກັນໄພຈຳກັດ, ຕະຫຼອດຮອດພະນັກງານຂອງທັງສອງຝ່າຍກໍໄດ້ເຂົ້າຮ່ວມເປັນສັກຂີພະຍານໃນຄັ້ງນີ້.



ການບໍລິການຊຳລະຄ່າສາທາລະນຸປະໂພກຜ່ານລະບົບທະນາຄານ (ຫຼື Bill Payment) ຂອງ ທຄຕລ ໄດ້ເລີ່ມໃຫ້ບໍລິການໃນປີ 2009 ແລະ ເປັນບໍລິການທີ່ໄດ້ມີການຊົມໃຊ້ຫຼາຍ. ປະຈຸບັນ, ທຄຕລ ໄດ້ໃຫ້ບໍລິການຊຳລະຄ່າສາທາລະນຸປະໂພກຮ່ວມກັບ 15 ພາກສ່ວນ ປະກອບມີ: ການຊຳລະຄ່າໄຟຟ້າ, ຄ່ານ້ຳປະປາ, ຄ່າໂທລະສັບ, ພາສີ-ອາກອນ, ຄ່າເຊົ່າສາຍເຄເບີ້ນ, ຄ່ານ້ຳມັນເຊື້ອໄຟ, ຄ່າບັດຂ້າມຂົວມິດຕະພາບລາວ-ໄທ ແຫ່ງທີ 1 ແລະ ຊຳລະຄ່າງວດເຊົ່າສິນເຊື່ອ. ປະຈຸບັນ ທຄຕລ ມີ 19 ສາຂາ, 82 ໜ່ວຍບໍລິການ, 15 ຫ້ອງແລກປ່ຽນ, ມີຕູ້ ATM 344 ເຄື່ອງທົ່ວປະເທດ. ທຄຕລ ໄດ້ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນວຽກງານບໍລິການ ໃຫ້ມີຄວາມທັນສະໄໝ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຊຳລະສະສາງ ແລະ ການເຮັດທຸລະກຳທາງດ້ານການເງິນຕ່າງໆ ໂດຍລູກຄ້າເອງ ບໍ່ຈຳເປັນຕ້ອງເຂົ້າມາທະນາຄານ.

ສັນຍາວ່າດ້ວຍການຮ່ວມມືການຊຳລະຄ່າບໍລິການຜ່ານ ທຄຕລ ທຄຕລ (Bill Payment) ລະຫວ່າງ ທຄຕລ ແລະ ບໍລິສັດເອັສທີ-ເມືອງໄທປະກັນໄພຈຳກັດ ແມ່ນເພື່ອອຳນວຍຄວາມສະດວກໜ້ອຍຂຶ້ນ ໃຫ້ແກ່ ການຊຳລະຄ່າງວດເງິນປະກັນໄພ ຂອງບັນດາລູກຄ້າ ບໍລິສັດເອັສທີ-ເມືອງໄທປະກັນໄພຈຳກັດ ຜ່ານ ທຄຕລ. ເຊິ່ງໃນເບື້ອງຕົ້ນການບໍລິການແມ່ນສາມາດຊຳລະຜ່ານເຄົ້າເຕ້ (Counters) ຈຸດບໍລິການ ຂອງ ສຳນັກງານໃຫຍ່, ສາຂາ ແລະ ໜ່ວຍບໍລິການ ທີ່ອລະບົບຂອງ ທຄຕລ. ນອກຈາກນີ້, ຍັງສາມາດຊຳລະຜ່ານຜະລິດຕະພັນ ອີເລັກໂທນິກ ຂອງ ທຄຕລ ໄດ້ເຊັ່ນຜ່ານ BCEL One ແລະ BCEL I-Bank. ໃນອະນາຄົດ ທຄຕລ ຈະມີການພັດທະນາໃຫ້ ສາມາດຊຳລະຜ່ານຕູ້ ATM ແລະ SMS Banking ໄດ້.



Facebook: **BCEL Bank**, Website: **www.bcel.com.la**